ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ....41......./ນຍ

ນະຄອນຫຼວງວຽງຈັນ, ວັນທີ 26. 3. 2014

# ຂໍ້ຕົກລົງ

# ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການມອບສິດໃຫ້ແຂວງ, ນະຄອນຫຼວງ ເປັນຜູ້ຄົ້ນຄວ້າພິຈາລະນາອະນຸຍາດສົ່ງອອກໄມ້ປູກທີ່ເປັນໄມ້ທ່ອນ ແລະ ໄມ້ເລື່ອຍ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06/05/2003.

- ອີງຕາມກົດໝາຍວ່າດ້ວຍປ່າໄມ້ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007.

- ອີງຕາມ ໜັງສືສະເໜີຂອງກະຊວງ ອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 379/ອຄ.ກຂອ, ລົງວັນທີ 04 ມີນາ 2014.

ເພື່ອໃຫ້ສອດຄ່ອງກັບນະໂຍບາຍຂອງລັດຖະບານ ໃນການປູກໄມ້ໃຫ້ເປັນສິນຄ້າສົ່ງອອກຕ່າງປະເທດ ແລະ ເປັນການອຳນວຍຄວາມສະດວກຂອງຜູ້ປະກອບການ ດ້ວຍການຫຼຸດຜ່ອນຂັ້ນຂອດທີ່ບໍ່ຈຳເປັນໃນການສົ່ງອອກໄມ້ປູກ, ໂດຍສອດຄ່ອງກັບນະໂຍບາຍ 03 ສ້າງ ໃນການມອບສິດ, ມອບຄວາມຮັບຜິດຊອບຈາກສູນກາງ.

## ນາຍົກລັດຖະມົນຕີ ຕົກລົງ:

**ມາດຕາ 1:** ໃຫ້ແຂວງ, ນະຄອນຫລວງ ເປັນຜູ້ຄົ້ນຄວ້າພິຈາລະນາອະນຸຍາດສົ່ງອອກໄມ້ປູກ (ໄມ້ສັກ, ໄມ້ຢາງພາລາ, ໄມ້ເກດສະໜາ, ໄມ້ອີກ, ໄມ້ກະຖິນນາລົງ ແລະ ໄມ້ກະຖິນເທພາ) ທີ່ເປັນໄມ້ທ່ອນ ແລະ ໄມ້ເລື່ອຍ.

**ມາດຕາ 2:** ໃຫ້ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເປັນເຈົ້າການຄົ້ນຄວ້າພິຈາລະນາອອກໃບອະນຸຍາດສົ່ງອອກໄມ້ປູກ ທີ່ເປັນໄມ້ທ່ອນ ແລະ ໄມ້ເລື່ອຍ ຕາມຂະນິດ

ໄມ້ທີ່ໄດ້ກຳນົດໄວ້ໃນມາດຕາ 1 ບົນພື້ນຖານການຢັ້ງຢືນແຫຼ່ງທີ່ມາຂອງໄມ້ ຈາກພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫລວງ.

ມາດຕາ 3: ໃຫ້ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫລວງ ເປັນເຈົ້າການຮັບຜິດຊອບ ຢັ້ງຢືນແຫລ່ງທີ່ມາຂອງໄມ້ປູກ, ພ້ອມດຽວກັນນັ້ນກໍ່ໃຫ້ເປັນເຈົ້າການຄຸ້ມຄອງ, ກວດກາ ແລະ ຕິດຕາມການເຄື່ອນຍ້າຍໄມ້ປູກອອກຕ່າງປະເທດເພື່ອຫລີກລ້ຽງບໍ່ໃຫ້ມີການສວຍໂອ ກາດລັກລອບເອົາໄມ້ທຳມະຊາດ ແລະ ໄມ້ປູກທີ່ບໍ່ນອນຢູ່ໃນມາດຕາ 1 ຊຸກເຊື່ອງໄປນຳ.

ມາດຕາ 4: ໃຫ້ກະຊວງ ອຸດສາຫະກຳ ແລະ ການຄ້າ ແລະ ກະຊວງ ກະສິກຳ ແລະ ປ່າໄມ້ ອອກບົດ ແນະ ນຳເພື່ອຜັນຂະຫຍາຍເນື້ອໃນຈິດໃຈຂອງຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນຢ່າງດີ.

ມາດຕາ 5: ບັນດາກະຊວງ, ອົງການທຽບເທົ່າກະຊວງ, ນະຄອນຫລວງ, ແຂວງໃນຂອບເຂດທົ່ວ ປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງຜັນ ຂະຫຍາຍຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງຕົນຢ່າງເຂັ້ມງວດ.

ມາດຕາ 6: ຂໍ້ຕົກລົງສະບັບນີ້ມີຜົນສັກສິດຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ທອງສິງ ທຳມະວົງ